ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 007 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 02 ກຸມພາ 2018

ສຳນັກງານ ຄຄຊ
ເລກ 0154
ວັນທີ 05 FEB 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 22-26/01/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 1,37% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກຍອດລວມຜະລິດຕະພັນພາຍໃນຂອງໄຕມາດທີ່ 4/2017 ເພີ່ມຂຶ້ນພຽງແຕ່ 2,6% ຈາກເພີ່ມຂຶ້ນ 3,2% ໃນໄຕມາດຜ່ານມາ. ພ້ອມກັນນັ້ນ, ຕົວເລກຍອດຂາຍບ້ານໃໝ່ຂອງເດືອນ 12/2017 ຫຼຸດລົງ 9,3% ຈາກເພີ່ມຂຶ້ນ 15,0% ໃນເດືອນຜ່ານມາ[1].

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 15-19/01/2018 | ອາທິດນີ້ 22-26/01/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2282 | 1,2452 | -1,37% |
| ເຢນ/ໂດລາ | 110,61 | 109,10 | 1,38% |
| ບາດ/ໂດລາ | 31,87 | 31,34 | 1,69% |
| ເປໂຊ/ໂດລາ | 50,77 | 51,02 | -0,49% |
| ຣູເປັຍ/ໂດລາ | 13.312,00 | 13.306,00 | 0,05% |
| ໂດລາສິງກະໂປ/ໂດລາ | 1,3190 | 1,3065 | 0,96% |
| ຢວນ/ໂດລາ | 6,3980 | 6,3200 | 1,23% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 4,84% ຈາກ 62,63 ໂດລາ/ບາເຣວ ມາເປັນ 65,66 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ຫຼຸດລົງ 1,07 ລ້ານບາເຣວ ຂອງອາທິດທີ 19/01/2018, ຈາກຫຼຸດລົງ 6,86 ລ້ານບາເຣວ ໃນອາທິດຜ່ານມາ[2].

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar
[2] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

- ສຳລັບລາຄາຄຳເພີ່ມຂຶ້ນ 1,40% ຈາກ 1.335,65 ໂດລາ/ອອນ ມາເປັນ 1.354,36 ໂດລາ/ອອນ ເນື່ອງຈາກການອ່ອນຄ່າລົງຂອງເງິນໂດລາສະຫະລັດ ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ, ແລ້ວຫັນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ

**2.ສະພາບເສດຖະກິດເງິນຕາພາຍໃນ**

**2.1 ສະພາບອັດຕາແລກປ່ຽນພາຍໃນ**

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,05% ແຕ່ອ່ອນຄ່າລົງ 1,36% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,26% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 3,34% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 19/01/2018 | | | ອາທິດນີ້ 26/01/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[3] | | | | | | | | | | | | |
| ໂດລາ | 8.290,19 | 8.313,46 | 8.295,69 | 8.281,76 | 8.304,67 | 8.291,29 | 0,10% | 0,11% | 0,05% | 0,24% | 0,27% | 0,26% |
| ບາດ | 260,24 | 261,88 | 261,39 | 263,60 | 265,55 | 265,00 | -1,27% | -1,38% | -1,36% | -3,25% | -3,31% | -3,34% |

**2.2 ສະພາບຖານເງິນຕາແລະປະລິມານເງິນ M2**

- ຖານເງິນຕາປະຈຳອາທິດນີ້ເພີ່ມຂຶ້ນ 0,27% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 11,99%;
- ປະລິມານເງິນ M2 ຫຼຸດລົງ 1,52% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 11,17%.

**2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ**

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (19-25/01/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 30,67 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 47,40 ລ້ານໂດລາ ແລະຂາຍໂດລາໄດ້ 16,73 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 451,42 ລ້ານບາດ (ໃນນີ້ຊື້ບາດໄດ້ 212,74 ລ້ານບາດ ແລະຂາຍບາດໄດ້ 664,16 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາຫຼຸດລົງ 8,11% ແລະ ເງິນບາດຫຼຸດລົງ 10,03%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ເງິນໂດລາຈາກທະນາຄານທຸລະກິດຈຳນວນ 5,60 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 3,39 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 20,85 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າບໍ່ມີການຊື້-ຂາຍ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 12-18/01/2018 | | ອາທິດນີ້ 19-25/01/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **40,70** | **249,09** | **47,40** | **212,74** | **16,46%** | **-14,59%** |
| - ທ/ຄທຸລະກິດລັດ | 14,23 | 92,90 | 21,43 | 82,62 | 50,60% | -11,07% |
| - ທ/ຄທຸລະກິດອື່ນໆ | 26,47 | 156,19 | 25,97 | 130,12 | -1,89% | -16,69% |
| **2. ການຂາຍເງິນຕາຕ່າງປະເທດ** | **29,09** | **725,61** | **16,73** | **664,16** | **-42,49%** | **-8,47%** |
| - ທ/ຄທຸລະກິດລັດ | 17,78 | 113,74 | 11,11 | 318,26 | -37,51% | 179,81% |
| - ທ/ຄທຸລະກິດອື່ນໆ | 11,31 | 611,87 | 5,62 | 345,90 | -50,31% | -43,47% |
| **ຊື້-ຂາຍສຸດທິທທກ** | **11,61** | **-476,52** | **30,67** | **-451,42** | **164,17%** | **-5,27%** |
| - ຜິດດ່ຽງຊື້-ຂາຍ | 28,53% | -191,30% | 64,70% | -212,19% | 126,78% | 10,92% |
| - ມູນຄ່າການຊື້-ຂາຍ | **69,79** | **974,70** | **64,13** | **876,90** | **-8,11%** | **-10,03%** |
| **3.ການຊື້-ຂາຍລະຫວ່າງທຫລກັບ ທທກ** | **3,00** | **0,00** | **5,60** | **0,00** | | |
| - ທຫລຊື້ຈາກທທກ | 3,00 | 0,00 | 5,60 | 0,00 | | |
| - ທຫລຂາຍໃຫ້ທທກ | 0,00 | 0,00 | 0,00 | 0,00 | | |
| **4.ຊື້-ຂາຍລະຫວ່າງທທກດ້ວຍກັນ** | **9,71** | **91,22** | **3,39** | **20,85** | | |
| **5.ທຫລກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 01/2018 ຄາດວ່າຈະຢູ່ໃນລະດັບ 0,41% (ຕົວເລກຄາດຄະເນ).

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ຫຼຸດລົງ 26,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 31,67 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 7,6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 57,45 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 711 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 129 ສະບັບ ເທົ່າກັບ 15,35% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 397,51 ຕື້ກີບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 60,76 ຕື້ກີບ ເທົ່າກັບ 18,04% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (19-26/01/2018) ມີທັງໝົດ 3.583 ຄັ້ງ ເຊິ່ງລວມມູນຄ່າການໂອນທັງໝົດທີ່ເປັນສະກຸນເງິນກີບໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນຈຳນວນ 600,2 ຕື້ກີບ ຈາກ 533,63 ຕື້ກີບ ມາເປັນ 1.133,83 ຕື້ກີບ ເທົ່າກັບ 112,47%. ສຳລັບກະຊວງການເງິນແມ່ນບໍ່ມີການເຄື່ອນໄຫວ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 963,43 ຈຸດ ຫຼຸດລົງ 0,66% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 158.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 907,84 ລ້ານກີບ ຫຼຸດລົງ 8% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 9,37% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 15-19/01/2017 | ດັດຊະນີອາທິດທີ 22-26/01/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 969,87 | 963,43 | -0,66 | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 32.300 | 189.920.000 | 5.880 | 154.600 | 888.590.000 | 5.748 | 378,64 | 367,88 | -132 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 175.300 | 796.500.000 | 4.544 | 4.200 | 19.250.000 | 4.583 | -97,60 | -97,58 | 40 |
| ບໍລິສັດລາວເວີນມະຫາຊົນ | - | - | 5.000 | - | - | 5.000 | - | - | - |
| ບໍລິສັດປີໂຕລ້ຽມເທລດດິ້ງລາວມະຫາຊົນ | 100 | 220.000 | 2.200 | - | - | 2.000 | - | - | -200 |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | - | - | 2.950 | - | - | 2.950 | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 100 | 170.000 | 1.700 | - | - | 1.550 | - | - | -150 |
| ທັງໝົດ | 207.800 | 986.810.000 | | 158.800 | 907.840.000 | | -23,58 | -8,00 | |

3. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- **ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຈັດກອງປະຊຸມຕ່າງໆ:** ❶ ກອງປະຊຸມກ່ຽວກັບການ "ສົ່ງເສີມການນຳໃຊ້ ICT ເຂົ້າໃນລະບົບ SME ແລະ Startup ເພື່ອຂັບເຄື່ອນເສດຖະກິດດິຈິຕອນ" ທີ່ (ສູນການຄ້າລາວໄອເຕັກ), ❷ ກອງປະຊຸມກ່ຽວກັບວຽກງານການປະເມີນຄວາມສ່ຽງແຫ່ງຊາດຮ່ວມກັບຊ່ຽວຊານຈາກທະນາຄານໂລກ ທີ່ (ຫ້ອງການທະນາຄານໂລກ), ❸ ກອງປະຊຸມຄະນະສະເພາະກິດແກ້ໄຂກໍລະນີເຈົ້າໜ້າທີ່ພາສີດ່ານລາວ-ໄທ ຍຶດເງິນ ໄດ້ 98 ລ້ານບາດ ທີ່ (ກົມຕຳຫຼວດເສດຖະກິດ), ❹ ກອງປະຊຸມສະຫຼຸບວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ສື່ສານ ປະຈຳປີ 2017 ແລະ ພິທີເປີດງານວາງສະແດງ Lao ICT Expo 2018 ທີ່ (ສູນການຄ້າລາວໄອເຕັກ), ❺ ກອງປະຊຸມເຜີຍແຜ່ເຊື່ອມຊຶມນິຕິກຳກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ ທີ່ (ຫ້ອງປະຊຸມແຫ່ງຊາດ), ❻ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນມັງກອນ ທີ່ (ຫ້ອງວ່າການສຳນັກງານນາຍົກ), ❼ ກອງປະຊຸມເປີດກວ້າງເພື່ອ

ທາບທາມຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ທີ່ (ນະຄອນຫຼວງວຽງຈັນ, ແຂວງຈຳປາສັກ ແລະ ແຂວງຫຼວງພະບາງ), ❽ ກອງປະຊຸມຖອດຖອນບົດຮຽນວຽກງານຄຸ້ມຄອງສະຖາບັນການເງິນຈຸລະພາກ ປະຈຳປີ 2017 ທີ່ (ແຂວງຫຼວງພະບາງ) ແລະ ❾ ກອງປະຊຸມປຶກສາຫາລືກ່ຽວກັບການກະກຽມຄວາມພ້ອມເພື່ອລາຍງານຜົນການສະຫຼຸບ ການຈັດຕັ້ງປະຕິບັດກົດໝາຍ ແລະ ອອກນິຕິກຳໃຕ້ກົດໝາຍ ທີ່ (ຫ້ອງປະຊຸມສະພາແຫ່ງຊາດ).

**III.ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາແລະອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- **ສືບຕໍ່ຄົ້ນຄວ້າ:** ❶ ຄົ້ນຄວ້າກ່ຽວກັບການອອກທະບຽນວິສາຫະກິດໃຫ້ຕົວແທນການໃຫ້ບໍລິການຜະລິດຕະພັນເງິນດ່ວນຊຸມຊົນ ຫຼື BECOME, ❷ ຄົ້ນຄວ້າກ່ຽວກັບຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທຸລະກິດການໃຫ້ບໍລິການໂອນເງິນເຂົ້າໃນຕາຕະລາງຮ່າງຄຳແນະນຳໃນການວາງມາດຕະຖານຕໍ່ກັບສະຖາບັນການເງິນທີ່ລະເມີດລະບຽບກົດໝາຍ ແລະ ❸ ຄົ້ນຄວ້າການສ້າງຮ່າງຂໍ້ຕົກລົງວ່າດ້ວຍລະບົບການຊຳລະທຸລະກຳຍ່ອຍ ACH;
- **ກະກຽມຈັດກອງປະຊຸມ:** ❶ ກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບກະກຽມເນື້ອໃນສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ (ຄັ້ງທີ 3) ທີ່ (ທຫລ), ❷ ກອງປະຊຸມປຶກສາຫາລືຮ່າງແຜນຈັດຕັ້ງປະຕິບັດການເຂົ້າເຖິງແຫຼ່ງການບໍລິການທາງດ້ານການເງິນ ສຳລັບ ສປປ ລາວ ໄລຍະ 5 ປີ (2016-2020) ທີ່ (ທຫລ), ❸ ກອງປະຊຸມປຶກສາຫາລືວຽກງານຕິດຕາມກວດກາການກໍ່ສ້າງໜ່ວຍພັກເຂັ້ມແຂງ ທີ່ (ທຫລ), ❹ ກອງປະຊຸມປຶກສາຫາລືຮ່າງແຜນຈັດຕັ້ງປະຕິບັດການເຂົ້າເຖິງແຫຼ່ງທຶນການບໍລິການທາງດ້ານການເງິນສຳລັບ ສປປ ລາວ ທີ່ (ທຫລ);
- **ເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງກົດໝາຍວ່າດ້ວຍ ທຫລ ທີ່ (ກະຊວງຍຸຕິທຳ), ❷ ກອງປະຊຸມທະວິພາຄີລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງ ມຽນມາ ທີ່ (ໂຮງແຮມລາວພາຊາ), ❸ ກອງປະຊຸມແກ້ໄຂສະພາບຄ່ອງຂອງຕະຫຼາດຫຼັກຊັບລາວ ຮ່ວມກັບຕະຫຼາດຫຼັກຊັບລາວ ແລະ ບໍລິສັດຈົດທະບຽນ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ